ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍ່ແກ້ວ

ເລກທີ 367 /ຈຂ.ບກ

ບໍ່ແກ້ວ, ວັນທີ 04-04-2023

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳແຂວງ ບໍ່ແກ້ວ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ 4 ມາດຕາ 19 ແລະ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍຍະກຳ ( ສະບັບປັບປຸງ ) ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019 ພາກທີ 3 ໝວດທີ 7 ມາດຕາ 67, 68 ແລະ 69 ວ່າດ້ວຍການສ້າງຕັ້ງກອງທຶນກິລາ-ກາຍຍະກຳ;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ສະບັບເລກທີ 07/ສພຂ, ລົງວັນທີ 21 ກຸມພາ 2023;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງບໍ່ແກ້ວ ສະບັບເລກທີ 27/ຄປຈຂ, ລົງວັນທີ 27 ມີນາ 2023.

## ເຈົ້າແຂວງ ບໍ່ແກ້ວ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາເພື່ອສະສົມທຶນຮອນເຂົ້າໃນການພັດທະນາ ກິລາ-ກາຍຍະກຳ ພາຍໃນແຂວງ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາເສດຖະກິດສັງຄົມ ຂອງທ້ອງຖິ່ນເພື່ອຮອງຮັບການພັດທະນາກິລາ-ກາຍຍະກຳ ໃຫ້ມີຄຸນນະພາບດີຂຶ້ນ.

**ມາດຕາ 2 ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳແຂວງ**

ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ ແມ່ນກອງທຶນຂອງລັດ ແລະ ສັງຄົມທີ່ສ້າງຕັ້ງຂຶ້ນ

ເພື່ອຮັບໃຊ້ເຂົ້າ ໃນການພັດທະນາ ວຽກງານກິລາ-ກາຍຍະກຳຂອງແຂວງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ກອງທຶນສົ່ງເສີມ** ໝາຍເຖິງ ການທ້ອນໂຮມເງິນທຶນທີ່ໄດ້ມາຈາກຫຼາຍແຫຼ່ງລາຍຮັບເພື່ອຮັບໃຊ້ໃນການສົ່ງເສີມ ກິລາ-ກາຍຍະກຳ;
2. **ການພັດທະນາ** ໝາຍເຖິງ ການພັດທະນາດ້ານການບໍລິຫານ, ເຕັກນິກ, ທັກສະ ແລະ ຄວາມຊຳນານຂອງນັກກິລາ, ຄູຝຶກ ແລະ ກຳມະການຕັດສິນໃຫ້ດີຂຶ້ນ ກ້າວໄປສູ່ລະດັບແຂວງ, ລະດັບຊາດ ແລະ ສາກົນ;
3. **ກິລາ-ກາຍຍະກຳ** ແມ່ນການເຄື່ອນໄຫວກິດຈະກຳຕ່າງໆ ໃນການຝຶກແອບ, ການແຂ່ງຂັນ, ການສະແດງ, ການແລກປ່ຽນແບບບຸກຄົນ, ລວມໝູ່ທີ່ມີສີລະປະ, ລວດລາຍສະເພາະ ເພື່ອເຮັດໃຫ້ຮ່າງກາຍແຂງແຮງ, ສວຍງາມ , ຈິດໃຈເບີກບານ, ສະໝອງໄດ້ຮັບການພັດທະນາ, ສ້າງຄວາມຊຳນານ, ປະສົບການທາງດ້ານເຕັກນິກ, ຍຸດທະວິທີເປັນທີ່ນິຍົມຊົມຊອບຂອງມວນຊົນກ້າວໄປເຖິງການສະແດງ, ການແຂ່ງຂັນເພື່ອຄວາມເປັນເລີດນຳເອົາກຽດສັກສີ ແລະ ຊື່ສຽງມາສູ່ຂະແໜງການ, ທ້ອງຖິ່ນ, ແຂວງ ແລະ ປະເທດຊາດ;
4. **ກິລາລະດັບສູງ** ແມ່ນກິດຈະກຳການແຂ່ງຂັນກິລາ ທີ່ແນ່ໃສ່ບັນລຸຜົນທາງດ້ານມາດຕະຖານ, ເຕັກນິກ, ຍຸດທະວິທີ, ວິທະຍາສາດ, ສະຖິຕິ, ຄຸນນະພາບໃນລະດັບຊາດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ;
5. **ກິລາມວນຊົນ** ແມ່ນກິດຈະກຳການຝຶກແອບ, ການສະແດງ, ການຫຼິ້ນ, ການແຂ່ງຂັນກິລາ-ກາຍຍະກຳຂອງພົນລະເມືອງທົ່ວໄປໂດຍບໍ່ຈຳແນກເຊື້ອຊາດ, ອາຍຸ, ເພດໄວ, ສຸຂະພາບ, ຄວາມພິການ, ຖານະທາງດ້ານເສດຖະກິດ-ສັງຄົມຢູ່ໃນຮາກຖານ, ຂະແໜງການ ແລະ ທ້ອງຖິ່ນ ແນ່ໃສ່ສົ່ງເສີມສຸຂະພາບ, ຄວາມສາມັກຄີ ແລະ ຄວາມມ່ວນຊື່ນເປັນຕົ້ນໂດຍປະຕິບັດຕາມກົດລະບຽບ, ກະຕິກາທີ່ແນ່ນອນ.

**ມາດຕາ 4 ຫຼັກການກ່ຽວກັບກອງທຶນ**

**ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳແຂວງບໍ່ແກ້ວ ປະຕິບັດຕາມຫຼັກການດັ່ງນີ້:**

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ເປີດເຜີຍ, ມີປະຊາທິປະໄຕ, ພາວະວິໄສ, ຊັດເຈນ, ຍຸຕິທຳ, ວ່ອງໄວ ແລະ ມີຄວາມໂປ່ງໃສ ສາມາດກວດສອບໄດ້;
3. ມີສ່ວນຮ່ວມຂອງທຸກອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ປະຊາຊົນ ແລະ ສື່ມວນຊົນ;
4. ປະສານສົມທົບ, ປຶກສາຫາລືກັບຄະນະຄຸ້ມຄອງບໍລິຫານກອງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຕິດຕາມກວດກາໃຫ້ເປັນປົກກະຕິ.

**ມາດຕາ 5 ການປະກອບສ່ວນກອງທຶນ**

ໄດ້ຈາກການປະກອບສ່ວນ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ນັກທຸລະກິດ, ພໍ່ຄ້າຊາວຂາຍ;

ໄດ້ຈາກການປະກອບສ່ວນ ຂອງປະຊາຊົນບັນດາເຜົ່າພາຍໃນ ແລະ ຕ່າງປະເທດ ສາມາດປະກອບສ່ວນເຂົ້າໃນກອງທຶນຕາມຄວາມສະໝັກໃຈ.

## ໝວດທີ 2

## ການສົ່ງເສີມ ແລະ ພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ ແຂວງ ບໍ່ແກ້ວ

### ມາດຕາ 6 ການສ້າງຕັ້ງກອງທຶນ

ກອງທຶນກິລາ-ກາຍຍະກຳແຂວງບໍ່ແກ້ວ ສ້າງຕັ້ງຂຶ້ນດ້ວຍການປະກອບສ່ວນຈາກງົບປະມານຂອງລັດ ແລະ ພະນັກງານ - ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ນັກທຸລະກິດ ຊາວຄ້າຂາຍ ແລະ ປະຊາຊົນບັນດາເຜົ່າທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກງານກິລາ-ກາຍຍະກຳຂອງແຂວງ;

ກອງທຶນກິລາ-ກາຍຍະກຳແຂວງບໍ່ແກ້ວ ແມ່ນສ້າງຕັ້ງຂຶ້ນຢູ່ພະແນກສຶກສາທິການ ແລະ ກິລາແຂວງ ຫ້ອງການສຶກສາທິການ ແລະ ກິລາເມືອງ ໂດຍການເປີດບັນຊີຢູ່ທະນາຄານພັດທະນາລາວ ສາຂາແຂວງບໍ່ແກ້ວ ຂັ້ນແຂວງ ແລະ ຂັ້ນເມືອງ ( ສຳລັບຂັ້ນເມືອງຖ້າບໍ່ມີໜ່ວຍບໍລິການທະນາຄານພັດທະນາລາວ ແມ່ນເປີດຢູ່ທະນາຄານໃດກໍ່ໄດ້ ທີ່ເຫັນວ່າມີຄວາມສະດວກ ).

### ມາດຕາ 7 ແຫຼ່ງລາຍຮັບຂອງກອງທຶນ ສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ

ແຫຼ່ງລາຍຮັບເຂົ້າໃນກອງທຶນ ສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳໄດ້ມາຈາກ:

1. ການປະກອບສ່ວນຈາກງົບປະມານຂອງລັດ;
2. ລາຍຮັບຈາກການແຂ່ງຂັນກິລາ ແລະ ລາຍໄດ້ອື່ນ ເປັນຕົ້ນການມອບໂອນ, ຍົກຍ້າຍນັກກິລາ, ການບໍລິການ, ການຂາຍລິຂະສິດ ແລະ ອຸປະກອນກ່ຽວກັບກິລາ-ກາຍຍະກຳ;
3. ການປະກອບສ່ວນ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານລັດວິສາຫະກິດບຸກຄົນ , ນິຕິບຸກຄົນ, ຜູ້ປະກອບການຫົວໜ່ວຍທຸລະກິດ, ບໍລິສັດຫ້າງຮ້ານ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 8 ການພັດທະນານັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ

1. ການພັດທະນານັກກິລາແມ່ນ ການຍົກລະດັບຄວາມຮູ້, ຄວາມສາມາດ, ເຕັກນິກ, ການຝຶກແອບ, ຝຶກຊ້ອມ, ທົດສອບ ໃນລະດັບລຸ້ນອາຍຸຕ່າງໆ ລວມທັງນັກກິລາມວນຊົນເພື່ອໃຫ້ມີຄວາມຊຳນິ ຊຳນານ, ມີສຸຂະພາບແຂງແຮງ ກະກຽມເພື່ອເຂົ້າຮ່ວມການແຂ່ງຂັນກິລາໃນລະດັບຕ່າງໆ ໃຫ້ມີປະສິດທິພາບ;
2. ການພັດທະນາບຸກຄະລາກອນກິລາ-ກາຍຍະກຳ ແມ່ນການຝຶກຊ້ອມ, ການຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງກ່ຽວກັບວິຊາການທີ່ກ່ຽວຂ້ອງ ໃຫ້ແກ່ບຸກຄະລາກອນເພື່ອຮັບໃຊ້ເຂົ້າໃນວຽກງານກິລາ-ກາຍຍະກຳໃຫ້ມີປະສິດທິພາບ;
3. ສົ່ງເສີມການຈັດຕັ້ງສະໂມສອນກິລາ-ກາຍຍະກຳປະເພດຕ່າງໆ ຂອງບຸກຄົນ, ນິຕິບຸກຄົນໃຫ້ມີການຂະຫຍາຍຕົວ.

## ໝວດທີ 3

## ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ

### ມາດຕາ 9 ການຄຸ້ມຄອງ ເງິນກອງທຶນ

ການຄຸ້ມຄອງ ເງິນກອງທຶນປະຕິບັດຕາມຫຼັກການດັ່ງນີ້:

1. ການຄຸ້ມຄອງເງິນກອງທຶນ ຕ້ອງສອດຄ່ອງກັບກົດໝາຍ ງົບປະມານແຫ່ງລັດ;

2. ການນຳໃຊ້ເງິນກອງທຶນຕ້ອງໃຫ້ຖືກຕາມເປົ້າໝາຍ, ປະຫຍັດ ແລະ ມີປະສິດທິຜົນ;
3. ການໃຊ້ຈ່າຍເງິນກອງທຶນແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກ ທ່ານ ປະທານ ຫຼື ຮອງປະທານ ເທົ່ານັ້ນ;
4. ສຳລັບເມືອງ ແມ່ນມອບໃຫ້ຫ້ອງການ, ກົມກອງທີ່ກ່ຽວຂ້ອງເປັນຜູ້ທ້ອນໂຮມ ແລ້ວມອບໃຫ້ຄະນະຮັບຜິດຊອບຂັ້ນເມືອງ ( ຫ້ອງການສຶກສາທິການ ແລະ ກິລາເມືອງ ) ເປັນຜູ້ທ້ອນໂຮມ ແລ້ວຫັກ 30 ເປີເຊັນ ໄວ້ເປັນເງິນກອງທຶນກິລາ-ກາຍຍະກຳຂັ້ນເມືອງ ແລະ 70 ເປີເຊັນ ແມ່ນມອບໂອນເຂົ້າບັນຊີຂອງກອງທຶນກິລາແຂວງ ບໍ່ໃຫ້ກາຍເດືອນ ພຶດສະພາ ຂອງທຸກໆ ປີ.

ມາດຕາ 10 ການນຳໃຊ້ກອງທຶນ

1. ນຳໃຊ້ເຂົ້າໃນການຄັດເລືອກ, ການເຝິກແອບ ແລະ ການແຂ່ງຂັນກິລາລະດັບເມືອງ, ແຂວງ ແລະ ລະດັບຊາດ;
2. ນຳໃຊ້ເປັນລາງວັນໃຫ້ແກ່ນັກກິລາທີ່ໄດ້ຮັບຫຼຽນ ແຕ່ລະປະເພດ;

ກ. ປະເພດບຸກຄົນ:

| | |
|---|---|
| 1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 5,000,000 ກີບຕໍ່ຫຼຽນ; |
| 2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 4,000,000 ກີບຕໍ່ຫຼຽນ; |
| 3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 3,000,000 ກີບຕໍ່ຫຼຽນ. |

ຂ. ປະເພດຄູ່:

| | |
|---|---|
| 1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 10,000,000 ກີບຕໍ່ຫຼຽນ; |
| 2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 8,000,000 ກີບຕໍ່ຫຼຽນ; |
| 3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 6,000,000 ກີບຕໍ່ຫຼຽນ. |

ຄ. ປະເພດທີມທີ່ມີຈຳນວນ 3-10 ຄົນ:

| | |
|---|---|
| 1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 20,000,000 ກີບຕໍ່ຫຼຽນ; |
| 2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 16,000,000 ກີບຕໍ່ຫຼຽນ; |
| 3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 12,000,000 ກີບຕໍ່ຫຼຽນ. |

- ສຳລັບປະເພດທີມ ທີ່ບໍ່ມີນັກກິລາຕົວສຳຮອງຈະໄດ້ຮັບນະໂຍບາຍດັ່ງນີ້:

| | |
|---|---|
| 1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 15,000,000 ກີບຕໍ່ຫຼຽນ; |
| 2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 12,000,000 ກີບຕໍ່ຫຼຽນ; |
| 3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 9,000,000 ກີບຕໍ່ຫຼຽນ. |

ງ. ປະເພດທີມທີ່ມີຈຳນວນ 11 ຄົນຂຶ້ນໄປ:

| | |
|---|---|
| 1) ຫຼຽນຄຳ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 40,000,000 ກີບຕໍ່ຫຼຽນ; |
| 2) ຫຼຽນເງິນ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 32,000,000 ກີບຕໍ່ຫຼຽນ; |
| 3) ຫຼຽນທອງ ໄດ້ຮັບໃບຍ້ອງຍໍ ຂັ້ນແຂວງ ແລະ ເງິນລາງວັນ | 24,000,000 ກີບຕໍ່ຫຼຽນ. |

3. ນຳໃຊ້ເປັນລາງວັນໃຫ້ແກ່ຄູຝຶກ, ຜູ້ຊ່ວຍຄູຝຶກ ເຊິ່ງຈະໄດ້ຮັບເງິນລາງວັນ 20% ຂອງແຕ່ລະລາງວັນ ( ໂດຍຈະບໍ່ຫັກເງິນຈາກລາງວັນຂອງນັກກິລາ ).
4. ນຳໃຊ້ເຂົ້າໃນການປະຕິບັດນະໂຍບາຍຕໍ່ຄະນະຮັບຜິດຊອບນຳພາເຂົ້າຮ່ວມການແຂ່ງຂັນ, ຄູຝຶກ ແລະ ນັກ

ກິລາທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດ ຍ້ອນການເຝິກແອບ ຫຼື ການແຂ່ງຂັນກິລາ.

5. ນຳໃຊ້ເຂົ້າໃນການຈັດຊື້ ແລະ ບຳລຸງຮັກສາອຸປະກອນກິລາ-ກາຍຍະກຳ.
6. ນຳໃຊ້ເຂົ້າໃນການຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳແຂວງ.

**ມາດຕາ 11 ການເປີດບັນຊີເງິນຝາກຂອງກອງທຶນ**

ການເປີດບັນຊີເງິນຝາກກອງທຶນແມ່ນເປີດຢູ່ທະນາຄານພັດທະນາລາວ ສາຂາແຂວງບໍ່ແກ້ວ ໂດຍແມ່ນຫ້ອງວ່າການແຂວງ ແລະ ພະແນກສຶກສາທິການ ແລະ ກິລາແຂວງເປັນຜູ້ຖືບັນຊີ.

- ຊື່ບັນຊີ: ( Bokeo ) BK sport
- ເລກບັນຊີ:..................

- ການປະກອບສ່ວນເງິນກອງທຶນແມ່ນປະຕິບັດຕາມມາດຕາ 07.
- ແຕ່ລະເມືອງຕ້ອງໄດ້ເປີດບັນຊີກອງທຶນກິລາ-ກາຍຍະກຳປະຈຳເມືອງຂອງຕົນ.

**ມາດຕາ 12 ການຄຸ້ມຄອງວັດຖຸຂອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ**

ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ ທີ່ເປັນວັດຖຸ ແມ່ນຄຸ້ມຄອງຕາມລະບົບ ສ້າງ ເພື່ອຮັບປະກັນບໍ່ໃຫ້ມີການຕົກເຮ່ຍເສຍຫາຍ ແລະ ເບີກຈ່າຍໃຫ້ທັນຕາມສະພາບການໂດຍແມ່ນພະແນກສຶກສາທິການ ແລະ ກິລາແຂວງ ເປັນຜູ້ຄຸ້ມຄອງ.

## ໝວດທີ 4

## ຄະນະຮັບຜິດຊອບຄຸ້ມຄອງກອງທຶນ

**ມາດຕາ 13 ຄະນະຮັບຜິດຊອບຄຸ້ມຄອງ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳປະກອບມີ 2 ຂັ້ນ ດັ່ງນີ້:**

**ກ. ຂັ້ນແຂວງ ປະກອບມີ:**

| | | |
|---|---|---|
| 1. | ທ່ານ ຮອງເຈົ້າແຂວງ ( ຜູ້ຊີ້ນຳຂົງເຂດວັດທະນາທຳ-ສັງຄົມ ) | ເປັນປະທານ; |
| 2. | ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ເປັນຮອງ; |
| 3. | ທ່ານ ຫົວໜ້າຫ້ອງວ່າການແຂວງ | ເປັນຮອງ; |
| 4. | ທ່ານ ຮອງເຈົ້າເມືອງ 05 ເມືອງ ( ຜູ້ຊີ້ນຳຂົງເຂດວັດທະນາທຳ-ສັງຄົມ ) | ເປັນຄະນະ; |
| 5. | ທ່ານ ຫົວໜ້າພະແນກການເງິນແຂວງ | ເປັນຄະນະ; |
| 6. | ທ່ານ ຫົວໜ້າກອງບັນຊາການທະຫານແຂວງ | ເປັນຄະນະ; |
| 7. | ທ່ານ ຫົວໜ້າກອງບັນຊາການ ປກສ ແຂວງ | ເປັນຄະນະ; |
| 8. | ທ່ານ ຫົວໜ້າພະແນກອຸດສະຫະກຳ - ການຄ້າແຂວງ | ເປັນຄະນະ; |
| 9. | ທ່ານ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ | ເປັນຄະນະ; |
| 10. | ທ່ານ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ | ເປັນຄະນະ; |
| 11. | ທ່ານ ຫົວໜ້າພະແນກພະລັງງານ - ບໍ່ແຮ່ແຂວງ | ເປັນຄະນະ; |
| 12. | ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ | ເປັນຄະນະ; |

13. ທ່ານ ຮອງຫົວໜ້າຄັງເງິນແຫ່ງຊາດປະຈຳແຂວງ ເປັນຄະນະ;

14. ທ່ານ ບັນດາສະຫະພັນກິລາ ແຕ່ລະປະເພດ ຂອງແຂວງ ເປັນຄະນະ;

15. ທ່ານ ຫົວໜ້າຂະແໜງບໍລິຫານ ແລະ ການເງິນ ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ;

16. ທ່ານ ຫົວໜ້າ ແລະ ຮອງຂະແໜງກິລາ-ກາຍຍະກຳ ເປັນຄະນະ;

17. ທ່ານ ວິຊາການຂະແໜງກິລາ-ກາຍຍະກຳ ເປັນຄະນະ;

18. ທ່ານ ວິຊາການຂະແໜງບໍລິຫານ ແລະ ການເງິນພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ.

ຂ. ຂັ້ນເມືອງ ປະກອບມີ:

1. ທ່ານ ຮອງເຈົ້າເມືອງ ( ຜູ້ຊີ້ນຳຂົງເຂດວັດທະນະທຳ-ສັງຄົມ ) ເປັນປະທານ;

2. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຮອງ;

3. ທ່ານ ຫົວໜ້າຫ້ອງວ່າການເມືອງ ເປັນຮອງ;

4. ທ່ານ ຫົວໜ້າຫ້ອງການການເງິນເມືອງ ເປັນຄະນະ;

5. ທ່ານ ຫົວໜ້າກອງບັນຊາການ ທະຫານ ເມືອງ ເປັນຄະນະ;

6. ທ່ານ ຫົວໜ້າກອງບັນຊາການ ປກສ ເມືອງ ເປັນຄະນະ;

7. ທ່ານ ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຄະນະ;

8. ທ່ານ ຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນຄະນະ;

9. ທ່ານ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນຄະນະ;

10. ທ່ານ ຫົວໜ້າຫ້ອງການສາທາລະນະສຸກເມືອງ ເປັນຄະນະ;

11. ທ່ານ ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;

12. ທ່ານ ຮອງຫົວໜ້າຄັງເງິນເມືອງ ເປັນຄະນະ;

13. ທ່ານ ບັນດາສະຫະພັນກິລາ ແຕ່ລະປະເພດ ຂອງເມືອງ ເປັນຄະນະ;

14. ທ່ານ ຫົວໜ້າໜ່ວຍງານບໍລິຫານ ແລະ ການເງິນ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;

15. ທ່ານ ຫົວໜ້າ ແລະ ຮອງໜ່ວຍງານກິລາ-ກາຍຍະກຳເມືອງ ເປັນຄະນະ;

16. ທ່ານ ວິຊາການໜ່ວຍງານກິລາ-ກາຍຍະກຳເມືອງ ເປັນຄະນະ;

17. ທ່ານ ວິຊາການໜ່ວຍງານບໍລິຫານ ແລະ ການເງິນຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບຄຸ້ມຄອງ ກອງທຶນແຕ່ລະຂັ້ນມີດັ່ງນີ້:**

ຄະນະຮັບຜິດຊອບຄຸ້ມຄອງກອງທຶນແຕ່ລະຂັ້ນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາຮັບຮອງແຜນພັດທະນາ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ;
2. ພິຈາລະນາຮັບຮອງເອົາລະບຽບການຕ່າງໆ, ຈັດສັນທຶນເຂົ້າໃສ່ແຜນການ, ແຜນງານ ແລະ ໂຄງການຕ່າງໆ ເພື່ອນຳສະເໜີ ທ່ານປະທານ ຫຼື ຮອງປະທານອະນຸມັດ;
3. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ ຄຸ້ມຄອງ ແລະ ນຳໃຊ້ເງິນກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນ;
4. ນຳເອົາຂໍ້ຕົກລົງສະບັບນີ້ໄປເຜີຍແຜ່ຂະຫຍາຍໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ ແລະ ເລີກເຊີ່ງ ເພື່ອປຸກລະດົມການປະກອບສ່ວນເຂົ້າກອງທຶນ;

5. ຊີ້ນຳງ ພາ ເກັບກຳຈຳນວນພົນທີ່ປະກອບສ່ວນເຂົ້າກອງທຶນຂອງກອງເລຂາໃຫ້ລະອຽດ;
6. ອະນຸມັດສັ່ງຈ່າຍເງິນກອງທຶນຕາມລະບຽບການພ້ອມທັງຕິດຕາມລາຍຮັບ-ລາຍຈ່າຍໃຫ້ລະອຽດຊັດເຈນ ແລະ ຖືກຕ້ອງ;
7. ກຳນົດຮູບແບບໃນການຮັບ, ການປະກອບສ່ວນກອງທຶນ ຈາກບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ບຸກຄົນສວຍໂອກາດ;
8. ຈັດແບ່ງຄວາມຮັບຜິດຊອບໃຫ້ໝູ່ຄະນະຢ່າງລະອຽດຈະແຈ້ງ;
9. ມີການສະຫຼຸບລາຍງານເປັນປະຈຳ 3 ເດືອນ ຫຼື ປະຈຳແຕ່ລະໄຕມາດ ສົ່ງໃຫ້ຄະນະຮັບຜິດຊອບກອງທຶນທຸກຂັ້ນຮັບຊາບ.
10. ຄົ້ນຄວ້າແຫຼ່ງລາຍຮັບມາປະກອບສ່ວນເພີ່ມເຂົ້າໃນກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳແຂວງ.

**ມາດຕາ 15 ກອງເລຂາຄະນະຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳຂັ້ນແຂວງ**

ກອງເລຂາຊ່ວຍວຽກຂອງຄະນະຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳຂັ້ນແຂວງປະກອບມີ:

1. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ( ຜູ້ຊີ້ນຳວຽກງານກິລາ ) ເປັນຫົວໜ້າ;
2. ທ່ານ ຫົວໜ້າຂະແໜງການເງິນຫ້ອງວ່າການແຂວງ ເປັນຮອງ;
3. ທ່ານ ຫົວໜ້າຂະແໜງ ບໍລິຫານ ພະແນກສຶກສາທິການ ແລະ ກິລາ ເປັນຄະນະ;
4. ທ່ານ ຫົວໜ້າຂະແໜງ ກິລາ-ກາຍຍະກຳ ພະແນກສຶກສາທິການ ແລະ ກິລາ ເປັນຄະນະ;
5. ທ່ານ ຫົວໜ້າຂະແໜງ ການເງິນ ພະແນກສຶກສາທິການ ແລະ ກິລາ ເປັນຄະນະ.

**ມາດຕາ 16 ກອງເລຂາຄະນະ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳຂັ້ນເມືອງ**

ກອງເລຂາຊ່ວຍວຽກຂອງຄະນະຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳຂັ້ນເມືອງປະກອບມີ:

1. ທ່ານ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຫົວໜ້າ;
2. ທ່ານ ຮອງຫົວໜ້າໜ່ວຍງານການເງິນຫ້ອງວ່າການເມືອງ ເປັນຮອງ;
3. ທ່ານ ຫົວໜ້າໜ່ວຍງານ ບໍລິຫານ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;
4. ທ່ານ ຫົວໜ້າໜ່ວຍງານ ກິລາ-ກາຍຍະກຳຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ;
5. ທ່ານ ຫົວໜ້າໜ່ວຍງານການເງິນ ຫ້ອງການສຶກສາທິການ ແລະ ກິລາເມືອງ ເປັນຄະນະ.

**ມາດຕາ 17 ສິດ ແລະ ໜ້າທີ່ກອງເລຂາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳຂັ້ນແຂວງ**

ກອງເລຂາຊ່ວຍວຽກຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຫົວໜ້າຄະນະໃນການແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກຳ;
2. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງກອງທຶນ;
3. ຄົ້ນຄວ້າ, ວາງແຜນໂຄງການພັດທະນາກິລາ-ກາຍຍະກຳເພື່ອສະເໜີຕໍ່ຂັ້ນເທິງອະນຸມັດແລ້ວຈັດຕັ້ງປະຕິບັດ.

4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາສະເໜີສ້າງຕັ້ງ ແລະ ປັບປຸງ ຫຼື ຍົກເລີກ ຜູ້ປະກອບການທຸລະກິດດ້ານກິລາ-ກາຍຍະກໍາ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ການຝຶກຊ້ອມນັກກິລາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມແຂ່ງຂັນກິລາໃນລະດັບຕ່າງໆ;
6. ຄຸ້ມຄອງ, ພັດທະນາ, ນໍາໃຊ້ພື້ນຖານໂຄງລ່າງ, ພາຫະນະ, ວັດຖຸອຸປະກອນ, ງົບປະມານກິລາ-ກາຍຍະກໍາ ໃຫ້ມີປະສິດທິຜົນ;
7. ປຸກລະດົມຂົນຂວາຍຊອກຫາແຫຼ່ງທຶນເຂົ້າກອງທຶນ;
8. ສະຫຼຸບລາຍຮັບ-ລາຍຈ່າຍ ເງິນກອງທຶນ, ລາຍງານການເຄື່ອນໄຫວວຽກງານກອງທຶນປະຈໍາແຕ່ລະໄຕມາດ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 18 ສິດ ແລະ ໜ້າທີ່ກອງເລຂາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກໍາຂັ້ນເມືອງ**

ກອງເລຂາຊ່ວຍວຽກຂັ້ນເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຫົວໜ້າຄະນະໃນການແຕ່ງຕັ້ງ, ຊັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ລົງວິໄນຕໍ່ນັກກິລາ, ບຸກຄະລາກອນກິລາ-ກາຍຍະກໍາຢູ່ຂັ້ນເມືອງ;
2. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງກອງທຶນຢູ່ຂັ້ນເມືອງ;
3. ຄົ້ນຄວ້າ, ວາງແຜນ ໂຄງການພັດທະນາກິລາ-ກາຍຍະກໍາເພື່ອສະເໜີຕໍ່ຂັ້ນແຂວງອະນຸມັດແລ້ວຈັດຕັ້ງປະຕິບັດ;
4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສະເໜີສ້າງຕັ້ງ ແລະ ປັບປຸງ ຫຼື ຍົກເລີກ ຜູ້ປະກອບການທຸລະກິດດ້ານກິລາຢູ່ຂັ້ນເມືອງ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ການຝຶກຊ້ອມນັກກິລາ ພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມແຂ່ງຂັນກິລາໃນລະດັບຕ່າງໆ ຢູ່ຂັ້ນເມືອງ;
6. ຄຸ້ມຄອງ, ພັດທະນາ, ນໍາໃຊ້ພື້ນຖານໂຄງລ່າງ, ພາຫະນະ,ວັດຖຸອຸປະກອນ, ງົບປະມານກິລາ-ກາຍຍະກໍາ ໃຫ້ມີປະສິດທິຜົນ;
7. ປຸກລະດົມຂົນຂວາຍຊອກຫາແຫຼ່ງທຶນເຂົ້າກອງທຶນ;
8. ສະຫຼຸບການເກັບລາຍຮັບ-ລາຍຈ່າຍເງິນກອງທຶນ,ລາຍງານການເຄື່ອນໄຫວວຽກງານກອງທຶນເປັນປົກກະຕິ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ມາດຕາ 19 ກອງປະຊຸມຄະນະກໍາມະການ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກໍາ**

ຄະນະກໍາມະການ ກອງທຶນສົ່ງເສີມ ແລະ ພັດທະນາກິລາ-ກາຍຍະກໍາແຂວງ ເປີດກອງປະຊຸມສະໄໝສາມັນປີລະໜຶ່ງຄັ້ງ, ຖ້າມີຄວາມຈໍາເປັນ ຫຼື ວຽກຮີບດ່ວນກໍ່ສາມາດເປີດກອງປະຊຸມສະໄໝວິສາມັນເວລາໃດກໍ່ໄດ້, ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີຄະນະກໍາມະການກອງທຶນ ເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງຂອງຄະນະກໍາມະການທັງໝົດ, ມະຕິກອງປະຊຸມ ໃຫ້ຖືເອົາສຽງສ່ວນຫຼາຍ, ກໍລະນີສຽງເທົ່າກັນ ແມ່ນໃຫ້ຖືເອົາ ຄໍາເຫັນຂອງປະທານເປັນອັນຊີ້ຂາດ.

## ໝວດທີ 5
## ອົງການຕິດຕາມ ແລະ ກວດກາ

**ມາດຕາ 20 ອົງການຕິດຕາມ ແລະ ກວດກາ**

ອົງການຕິດຕາມ ແລະ ກວດກາ ກອງທຶນປະກອບມີດັ່ງນີ້:

- ກວດກາພາຍໃນ
  1. ອົງການກວດກາລັດແຂວງ;
  2. ຂະແໜງກວດກາລັດພະແນກການເງິນແຂວງ;
  3. ຂະແໜງກວດກາ-ປະເມີນຜົນ ແລະ ປະກັນຄຸນນະພາບ ພະແນກສຶກສາທິການ ແລະ ກິລາແຂວງ.
- ກວດກາພາຍນອກ
  1. ສະພາປະຊາຊົນແຂວງ;
  2. ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
  3. ອົງການໄອຍະການປະຊາຊົນແຂວງ;
  4. ພະແນກ ຍຸຕິທຳແຂວງ.

**ມາດຕາ 21 ການກວດກາກອງທຶນ**

ການກວດກາກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳມີດັ່ງນີ້:

1. ການປະຕິບັດແຜນການ, ໂຄງການ, ລະບຽບຂອງກອງທຶນ;
2. ການເຄື່ອນໄຫວ ຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງພະນັກງານທີ່ກ່ຽວຂ້ອງ;
3. ການເກັບລາຍຮັບ, ການນຳໃຊ້ງົບປະມານຂອງ ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ.

**ມາດຕາ 22 ຮູບການກວດກາ**

ຮູບການກວດກາ ການນຳໃຊ້ກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍຍະກຳ ມີດັ່ງນີ້:

1. ກວດກາ ປົກກະຕິ ປະຈຳແຕ່ລະໄຕມາດ, ຫົກເດືອນ ແລະ ປີ;
2. ການກວດກາສະເພາະກິດແມ່ນການກວດກາຖ້າພົບວ່າມີການລະເມີດຕໍ່ລະບຽບຄຸ້ມຄອງຂອງກອງທຶນ ( ເມື່ອມີຄຳສະເໜີ, ມີການຮ້ອງຂໍ ຫຼື ຕາມຄຳສັ່ງຂອງຂັ້ນເທິງ ) ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຫຼື ບໍ່ໄດ້ແຈ້ງລ່ວງໜ້າ ໃຫ້ຜູ້ຖືກກວດກາຮັບຮູ້ກ່ອນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ຂັດຂວາງ ຫຼື ປະຕິເສດການປະກອບເງິນເຂົ້າກອງທຶນໂດຍບໍ່ມີເຫດຜົນ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ, ໂຄສະນາຕົວະຍົວະຫຼອກລວງເພື່ອເອົາເງິນກອງທຶນໄປໃຊ້ຈ່າຍຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດຕິພີ່ນ້ອງ;
3. ໃຫ້ ຫຼື ຮັບສິນບົນ;

4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກອງທຶນ.

**ມາດຕາ 24 ຂໍ້ຫ້າມສຳລັບພະນັກງານ ທີ່ກ່ຽວຂ້ອງ**

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງໂດຍບໍ່ຖືກຕ້ອງ, ນຳໃຊ້ເງິນກອງທຶນໂດຍບໍ່ໄດ້ຮັບອະນຸມັດຈາກຄະນະຮັບຜິດຊອບຄຸ້ມຄອງກອງທຶນ;
2. ນຳໃຊ້ເງິນກອງທຶນເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ເພື່ອນ ແລະ ຍາດຕິພີ່ນ້ອງ;
3. ໃຫ້ສິນບົນ-ຮັບສິນບົນ;
4. ອະນຸມັດ ຫຼື ນຳໃຊ້ເງິນກອງທຶນໂດຍບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້;
5. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກອງທຶນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຜົນງານໃນການປະກອບສ່ວນເຂົ້າໃນການຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເກີດຜົນອັນສູງສົ່ງ ຕໍ່ວຽກງານກິລາ-ກາຍຍະກຳຂອງແຂວງ, ໄດ້ສ້າງກຽດຊື່ສຽງໃຫ້ແກ່ແຂວງ ບໍ່ແກ້ວ ຈະໄດ້ຮັບການຍ້ອງຍໍຕາມລະບຽບຫຼັກການ.

**ມາດຕາ 26 ນະໂຍບາຍຕໍ່ຄະນະນຳ, ຄູຝຶກ ແລະ ນັກກິລາ ທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດ**

ຄະນະນຳນັກກິລາ, ຄູຝຶກ ແລະ ນັກກິລາທີ່ໄດ້ຮັບບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດຍ້ອນການຝຶກຊ້ອມ, ເຂົ້າຮ່ວມ ແລະ ແຂ່ງຂັນກິລາຈະໄດ້ຮັບນະໂຍບາຍຕາມການຕົກລົງຂອງຄະນະຮັບຜິດຊອບກອງທຶນໂດຍອີງຕາມແຕ່ລະກໍລະນີຄື:

1. ຖ້າເສຍຊີວິດຈາກການຝຶກຊ້ອມ ແລະ ສາເຫດຍ້ອນການແຂ່ງຂັນຈະໄດ້ຮັບເງິນອຸດໜູນ 20,000,000 ກີບຕໍ່ຄົນ;
2. ຖ້າໄດ້ຮັບການບາດເຈັບ ຫຼື ເສຍອົງຄະ ຍ້ອນການຝຶກຊ້ອມ, ເຂົ້າຮ່ວມ ແລະ ແຂ່ງຂັນກິລາຈະໄດ້ມີການຕີລາຄາ ປະເພດເສຍອົງຄະ ແລ້ວປະຕິບັດນະໂຍບາຍເທື່ອດຽວຕາມກົດໝາຍວ່າດ້ວຍການປະກັນສັງຄົມ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະໄດ້ສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ໃຊ້ແທນຄ່າເສຍຫາຍ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ເປັນເຈົ້າການໃນການ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ;

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ, ການຈັດຕັ້ງຂອງລັດ, ສັງຄົມຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ ແຂວງບໍ່ແກ້ວ

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ບົວຄົງ ນາມມະວົງ